ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

********✧********

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ

ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ເລກທີ 332/ຄຊກລ.ສຄ

ນະຄອນຫລວງວຽງຈັນ, ວັນທີ: 25 SEP 2018

## ບົດລາຍງານກອງປະຊຸມປຶກສາຄວາມເປັນໄປໄດ້ ຮ່ວມກັບສູນກາງຊາວໜຸ່ມ ກ່ຽວກັບ ອາສາສະໝັກຂັ້ນບ້ານ ທີ່ທ່າລາດ, ແຂວງວຽງຈັນ ວັນທີ 5-6/9/2018.

ກອງປະຊຸມປຶກສາຄວາມເປັນໄດ້ ຮ່ວມກັບສູນກາງຊາວໜຸ່ມ ກ່ຽວກັບ ອາສາສະໝັກຂັ້ນບ້ານ ທີ່ທ່າລາດ, ແຂວງວຽງຈັນ ໄດ້ຈັດຂຶ້ນໃນວັນທີ 5-6 ເດືອນ ກັນຍາ ປີ 2018, ໂດຍການເປັນປະທານຂອງ ທ່ານ ພູຂຽວ ຈັນທະສີມບູນ, ຫົວໜ້າຫ້ອງການ ຄຊກລ ແລະ ທ່ານ ສຸລິຍາ ແກ້ວພິລາວົງ, ຫົວໜ້າກົມຂະບວນການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ.

- ຈຸດປະສົງ :

-ເພື່ອປຶກສາຫາລື ແນວທາງ ໃນການເຮັດວຽກຮ່ວມກັນ ລະຫວ່າງ ຫ້ອງການ ຄຊກລ, ສູນກາງຊາວໜຸ່ມ ເມືອງ, ແຂວງ ໂດຍອາໃສທ່າແຮງ ເຄືອຄ່າຍຊາວໜຸ່ມຂັ້ນບ້ານ ເພື່ອຊ່ວຍໃນການໂຄສະນາຜົນຮ້າຍຂອງ ລບຕ.

- ເພື່ອພັດທະນາຂໍ້ຕົກລົງ ຄະນະຮັບຜິດຊອບ ກິດຈະກຳ ແລະ ລະບົບການ ເຮັດວຽກຂອງ ອສບ.

- ເພື່ອພັດທະນາ ແລະ ນຳເອົາຜົນຂອງກອງປະຊຸມ ປະກອບເຂົ້າໃນແຜນ 2019 ຂອງໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຫ້ອງການ ຄຊກລ.

- ຜູ້ເຂົ້າຮ່ວມ:

ຫ້ອງການ ຄຊລກ ສູນກາງ, ຫ້ອງການປະສານງານ ຄຊກລ ແຂວງຄຳມ່ວນ ແລະ ເມືອງ, ຫ້ອງການປະສານງານ ຄຊກລ ແຂວງຊຽງຂວາງ ແລະ ເມືອງ, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ຊາວໜຸ່ມແຂວງຄຳມ່ວນ ແລະ ເມືອງ, ຊາວໜຸ່ມແຂວງຊຽງຂວາງ ແລະ ເມືອງ.

- ທີ່ກອງປະຊຸມໄດ້ປຶກສາຫາລື:

- ທ່ານຫົວໜ້າກົມຂະບວນການ ສູນກາງຊາວໜຸ່ມ ໄດ້ນຳສະເໜີມະຕິຕົກລົງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ສະບັບເລກທີ 03/ຄລສມ, ລົງວັນທີ 12 ມັງກອນ 2018.

- ທ່ານຫົວໜ້າຫ້ອງການ ຄຊກລ ໄດ້ນຳສະເໜີກ່ຽວກັບ ພາບລວມຂອງ ລບຕ ຢູ່ ສປປ ລາວ, ຈຸດປະສົງຂອງການຮ່ວມມື, ຮູບແບບ ແລະ ແຜນຄວາມຕ້ອງການ ອີງຕາມແຜນ 5 ປີ ຂອງແຜນການແກ້ບັນຫາ ລບຕ.

- ນຳສະເໜີກ່ຽວກັບ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ. ສະບັບເລກທີ 67/ນຍ, ລົງວັນທີ 12 ກຸມພາ 2018.

ບ້ານສີສັງວອນ, ເມືອງໄຊເສດຖາ, ໄປສະນີ: 7261, ໂທ: (856-21) 262386, ແຟັກ : 262396,

ອີເມວ: uxo.nra@gmail.com, www.nra.gov.la

- ນຳສະເໜີສະຖິຕິຜູ້ເຄາະຮ້າຍ ອຸປະຕິເຫດຈາກ ລບຕ, ຜົນຮ້າຍຂອງ ລບຕ ທີ່ກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ.

- ສາເຫດການພາໃຫ້ເກີດອຸປະຕິເຫດ ແລະ ວິທີປ້ອງກັນຕົນຈາກ ລບຕ.

- ຫ້ອງການ ຄຊກລ ກໍ່ໄດ້ສະເໜີກ່ຽວກັບການຈັດປະຕິບັດແຜນ 5 ປີ ຂອງການແກ້ໄຂບັນຫາ ລບຕ ເປັນຕົ້ນແມ່ນຂໍ້ ການນຳໃຊ້ ອສບ ໂຄສະນາຜົນຮ້າຍຂອງ ລບຕ ໃນນີ້ຍັງໄດ້ສະເໜີຂໍການຮ່ວມມືຊ່ວຍໃນປະຕິບັດ ແຜນດັ່ງກ່າວ ໃຫ້ໄດ້ຕາມແຜນທີ່ຕັ້ງໄວ້.

- ຄຊກລ ແຂວງຄຳມ່ວນ ເຫັນດີນຳທາງ ຄຊກລ ສູນກາງ ສະເໜີທາງສູນກາງຊາວໜຸ່ມຊ່ວຍພວກເຮົາ ສ່ວນ ຄຊກລ ແຂວງ ພວກເຮົາພ້ອມແລ້ວໃນການປະສານງານ ແລະ ຮ່ວມມື.

- ສະເໜີທຸກພາກສ່ວນໃນກອງປະຊຸມນີ້ມາຄົ້ນຄວ້າຊ່ວຍກັນ ວ່າຈະເອົາເມືອງເປົ້າໝາຍ ເປັນເມືອງໃດ ຈະເອົາຈັກບ້ານ, ຈັກເມືອງ ຈະມີກິດຈະກຳແນວໃດ. ພ້ອມກັນວາງຮູບແບບຂອງການໂຄສະນາ ຈະເຮັດແນວໃດ?, ຢາກເຫັນພາບລວມຂອງພາລະບົດບາດຂອງຊາວໜຸ່ມ ຈະເຮັດແນວໃດໃຫ້ປະຊົນເຊື້ອຖືບົດບາດຂອງຊາວໜຸ່ມ.

- ຄຊກລ ແຂວງຊຽງຂວາງ ເຫັນດີນຳທີ່ສູນກາງຊາວໜຸ່ມຈະມີສ່ວນຮ່ວມ ໃນການໂຄສະນາຜົນຮ້າຍຂອງ ລບຕ ແຕ່ພວກເຮົາສົນທະນາເພີ່ມເຕີ່ມ ກ່ຽວກັບນິຕິກຳ ເພື່ອເປັນບ່ອງອີງ ໃນການຈັດຕັ້ງປະຕິບັດ.

-ຜ່ານການຕິດຕາມ ຢູ່ຂັ້ນບ້ານ, ເມືອງ ພົບບັນຫາໂປເຕົ້ ແລະ ອຸປະກອນ ຍັງບໍ່ທົ່ວເຖິງເຂົາເຈົ້າ ຖ້າມີອາສາສະໝັກຂັ້ນບ້ານມາຊ່ວຍກໍ່ຈະເປັນການດີ ສ່ວນຮູບແບບ ເຮົາຄວນມາປຶກສາຫາລືກັນອີກ ວ່າວິທີການໃດ ຈະສາມາດເຂົ້າເຖິງກຸ່ມເປົ້າໝາຍ ໃນເຂດເມືອງ, ແຂວງຂອງຕົນໄດ້ດີກວ່າກັນ.

ຜ່ານສົນທະນາ ປະກອບຄຳຄິດເຫັນ ແລະ ແລກປ່ຽນຈາກການໂຄສະນາຜົນຮ້າຍຂອງ ລບຕ ໃນໄລຍະຜ່ານມາຈຶ່ງເອກະພາບກັນວ່າ: ຈະເອົາ 2 ແຂວງເປັນການທົດລອງ, ແຂວງຊຽງຂວາງ ແມ່ນເມືອງເມືອງແປກ ແລະເມືອງຄູນ, ແຂວງຄຳມ່ວນ ແມ່ນເມືອງ ບົວລະພາ ແລະ ເມືອງໄຊບົວທອງ.

ຈາກນັ້ນ ຈຶ່ງໄດ້ແບ່ງກຸ່ມສົນທະນາ ເປັນກຸ່ມນ້ອຍເພື່ອປຶກສາ ແລະ ລົງເລິກແຕ່ລະແຂວງ ຈາກນັ້ນຕົວແທນຂອງກຸ່ມ ນຳສະເໜີ ໂດຍການສົນທະນາ ແລະ ປຶກສາຫາລື ຂອງຜູ້ເຂົ້າຮ່ວມໝົດທຸກທ່ານ ດັ່ງນັ້ນຈຶ່ງສາມາດສະຫຼຸບໄດ້ດັ່ງນີ້:

1. ພາຍຫລັງຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບໃນການໂຄສະນາ ແລະ ຊ່ວຍເຫຼືອຜູ້ເຄາະຮ້າຍຈາກລະເບີດບໍ່ທັນແຕກ (ສູນກາງຊາວໜຸ່ມ) ໄດ້ຮັບການເຊັນຮັບຮອງ ແມ່ນຈະສົ່ງຂໍ້ຕົກລົງໃຫ້ຊາວໜຸ່ມແຂວງ ເພື່ອເປັນບ່ອນອີງໃນການຮ່າງ ແລະ ສະເໜີ ການຮັບຮອງຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບຂັ້ນແຂວງ (ຊາວໜຸ່ມແຂວງ).
2. ສຳລັບກິດຈະກຳແມ່ນຈະໜູນໃຊ້ຊາວໜຸ່ມບ້ານເປັນອາສາສະໝັກ ໃນການໂຄສະນາຜົນຮ້າຍຂອງ ລບຕ ເຊິ່ງທີມງານຂອງ ອສບ ປະກອບມີຊາວໜຸ່ມ 3 ທ່ານ ແລະ ນາຍບ້ານ 1 ທ່ານ ເຊິ່ງທີມງານນີ້ແມ່ນຈະໄດ້ເປັນໂຕຫຼັກໃນການໂຄສະນາຜົນຮ້າຍຂອງ ລບຕ ໃນບ້ານ.
3. ສາລັບແຜນວຽກແມ່ນໄດ້ເອກະພາບກັນດັ່ງນີ້:

ຈາກການຄົ້ນຄວ້າ ທັງສອງແຂວງ ແລະ ການສົນທະນາໃນກຸ່ມໃຫ່ຍ ຈຶ່ງເອກະພາບ ກັນດັ່ງນີ້

ຮູບແບບກິດຈະກຳ:

1 ໂຄສະນາຜ່ານການໂຄສະນາແບບເປັນກຸ່ມ 1 ຄັ້ງ ຕໍ່ເດືອນ.

2 ໂຄສະນາຜ່ານ ທາງໂທລະໂຄ້ງ ແມ່ນ 2 ຄັ້ງ ຕໍ່ເດືອນ.

3 ລວມບ້ານ ເປັນການປະເມີນຜົນໃນຕົວ 1 ຄັ້ງ ຕໍ່ເດືອນ.

ບ້ານສີສັງວອນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ,ໄປສະນີ 726, ໂທ: (85621) 262386, ແຟັກ : 262396,
ເບີອີເມວ : uxo.nra@gmail.com, www.nra.gov.la

ຈຳນວນບ້ານ: ແຂວງຊຽງຂວາງ ເມືອງແປກ ແລະ ເມືອງຄູນ ຈຳນວນ 30 ບ້ານ, ແຂວງຄຳມ່ວນ ເມືອງບົວລະພາ ແລະ ເມືອງໄຊບົວທອງ 30 ບ້ານ.

ຄາດຄະເນຕົວຊີ້ວັດ: ຈຳນວນພົນເຂົ້າຮ່ວມທັງໝົດ 10,000 ຄົນ, ຜູ້ໃຫຍ່ 5,000 ຄົນ, ເດັກນ້ອຍ 5,000 ຄົນ.

ການລົງຕິດຕາມຊຸກຍູ້ ເມືອງລົງ 1 ເດືອນ ຕໍ່ຄັ້ງ, ແຂວງ 3 ເດືອນ ຕໍ່ຄັ້ງ, ສູນກາງລົງຕິດຕາມ 6 ຄັ້ງຕໍ່ເດືອນ.

ການສ້າງຄວາມອາດສາມາດ: ສະເໜີການຝຶກອົບຮົມ ທີ່ກ່ຽວຂ້ອງກັບການເຕັກນິກໃນການໂຄສະນາພິດຮ້າຍຂອງ ລບຕ, ເຕັກນິກໃນການໂຄສະນາ ສື່ສານ, ການນຳໃຊ້ອຸປະກອນແຕ່ລະປະເພດ ແລະ ການປະດິດ ອຸປະກອນການໂຄສະນາ.

ສຳລັບອຸປະກອນ ແມ່ນສະເໜີໃຫ້ພິຈາລະນາທັງອຸປະກອນຮັບໃຊ້ທີມງານ ແລະ ອຸປະກອນແຈກຢາຍ.

ດັ່ງນັ້ນ, ກອງປະຊຸມຈຶ່ງເຫັນດີ ເອກະພາບໃຫ້ເອົາຂໍ້ມູນເລົ່ານີ້ເຂົ້າແຜນ ເພື່ອລະດົມທຶນ ສ່ວນການຈັດຕັ້ງປະຕິບັດ ສູນກາງຊາວໜຸ່ມ, ຊາວໜຸ່ມແຂວງ, ຊາວໜຸ່ມເມືອງ ລວມຮອດ ຄຊກລ ແມ່ນຍິນດີສະໜັບສະໜູນ ແລະ ປະຕິບັດຮ່ວມກັນ ເພື່ອປ້ອງກັນການບາດເຈັບ ແລະ ເສຍຊີວິດຈາກ ລບຕ.

ປະທານກອງປະຊຸມ

ບັນທຶກໂດຍ

Vitayphone

ພູຊຽວ ຈັນທະສິມບູນ

ບ້ານສີສັງວອນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ໄປສະນີ 726, ໂທ: (85621) 262386, ແຟັກ : 262396,
ເບີອີເມວ : uxo.nra@gmail.com, www.nra.gov.la